ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ບໍລິສັດ ຊີມັງລາວ ມະຫາຊົນ

LAO CEMENT PUBLIC COMPANY

ບ້ານ ໂພນພະເນົາ ວຽງຈັນ, ສປປລາວ ຕູ້ ປ.ນ 6821, ໂທຣ: (865-21) 451222,451116 ແຟັກ:451117
PHONPHANAO VILLAGE VIENTIANE, LAO P.D.R. P.O.BOX 6821, TEL : (856 - 21) 451222,451116 FAX:451117
E-mail:Lcc@laocement.com,www.laocement.com

ເລກທີ 153 /ບຊລ
ນະຄອນຫລວງວຽງຈັນ, ວັນທີ 02 MAY 2024

ຮຽນ : ທ່ານ ຫົວໜ້າສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ
: ທ່ານ ຜູ້ອໍານວຍການໃຫ່ຍຕະຫລາດຫຼັກຊັບລາວ
: ທ່ານ ຜູ້ຖືຮຸ້ນຂອງບໍລິສັດ ຊີມັງລາວ ມະຫາຊົນ

ເລື່ອງ : ແຈ້ງມະຕິຂອງກອງປະຊຸມສາມັນຜູ້ຖືຮຸ້ນ ປະຈໍາປີ 2023 ຄັ້ງວັນທີ 30/04/2024.

- ອີງຕາມຂໍ້ຕົກລົງວ່າດ້ວຍການລາຍງານ ແລະ ການເປີດເຜີຍຂໍ້ມູນ (ສະບັບປັບປຸງ) ຂອງ ສຄຄຊ ສະບັບເລກທີ 04/ສສຄ ລົງວັນທີ 28 ມັງກອນ ປີ 2019.
- ອີງຕາມລະບຽບຂອງຕະຫຼາດຫຼັກຊັບລາວວ່າດວ້ຍການເປີດເຜີຍຂໍ້ມູນສະບັບເລກທີ008/ຕລຊລ, ລົງວັນທີ 27 ກັນຍາ 2018.

ບໍລິສັດ ຊີມັງລາວ ມະຫາຊົນ (ບໍລິສັດ) ຂໍຖືເປັນກຽດແຈ້ງມະຕິ ຂອງກອງປະຊຸມ ສາມັນຜູ້ຖືຮຸ້ນ ປະຈໍາປີ 2023 (ຕໍ່ໄປນີ້ຮຽກວ່າ : ກອງປະຊຸມ) ໄດ້ໄຂຂຶ້ນໃນເວລາ 09:00 ຫາ 11:45 ໂມງ ຂອງວັນທີ 30/04/2024 ທີ່ຫ້ອງປະຊຸມຊັ້ນ 4 ສໍານັກງານລັດວິສາຫະກິດ ພກອ, ນະຄອນຫຼວງວຽງຈັນ ໂດຍການເປັນປະທານຂອງ ທ່ານ ເນັຍເຫຼັຍ ປະທານສະພາບໍລິຫານ ບຊລ, ພ້ອມດ້ວຍສະມາຊິກສະພາບໍລິຫານ ບຊລ, ຊຶ່ງມີຜູ້ເຂົ້າຮ່ວມກອງປະຊຸມທັງໝົດ 23 ທ່ານ, ໃນນີ້ ມີຜູ້ຖືຮຸ້ນເຂົ້າຮ່ວມດ້ວຍຕົນເອງຈໍານວນທັງໝົດ 11 ທ່ານ, ຜູ້ມອບສິດຈໍານວນ 13 ທ່ານ, ຊຶ່ງກວມຈໍານວນຮຸ້ນທັງໝົດທີ່ເຂົ້າຮ່ວມກອງປະຊຸມເທົ່າກັບ 28,043,700 ຮຸ້ນ, ນັບທັງຮຸ້ນທີ່ຖືກມອບສິດ, ບັນລຸອັດຕາສ່ວນ 70% ຂອງຈໍານວນຮຸ້ນ ບຊລ ທັງໝົດ ແລະຖືວ່າຄົບອົງປະຊຸມ ເພື່ອໃຫ້ສາມາດດໍາເນີນກອງປະຊຸມໄດ້ຕາມລະບຽບການຂອງ ບຊລ ແລະ ກົດໝາຍທີ່ກ່ຽວຂ້ອງ, ສໍາລັບຮຸ້ນທີ່ບໍ່ສາມາດເຂົ້າຮ່ວມກອງປະຊຸມມີຈໍານວນ 11,960,300 ຮຸ້ນເທົ່າກັບ 30% ຂອງຈໍານວນຮຸ້ນ ບຊລ.

<u>ກອງປະຊຸມໄດ້ພິຈາລະນາ ແລະມີມະຕິດັ່ງນີ້</u> :

- **ວາລະທີ 1**: ພິຈາລະນາ ແລະ ຮັບຮອງບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນ ປະຈໍາປີ 2022 ແລະ ບົດບັນທຶກກອງປະຊຸມວິສາມັນຜູ້ຖືຮຸ້ນ ປະຈໍາປີ 2022 ຂອງ ບໍລິສັດ ຊີມັງລາວ ມະຫາຊົນ

- **ມະຕິ** : ກອງປະຊຸມໄດ້ພິຈາລະນາ ແລະເຫັນດີດ້ວຍຄະແນນສຽງທັງໝົດຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມຄື :
  - ເຫັນດີຈຳນວນ 28,043,700 ສຽງ ເທົ່າກັບ 100 %
  - ບໍ່ເຫັນດີຈຳນວນ 0 ສຽງ ເທົ່າກັບ 0 %

- **ວາລະທີ 2** :ພິຈາລະນາ ແລະ ຮັບຮອງບົດລາຍງານວຽກງານການດຳເນີນທຸລະກິດ ຂອງບໍລິສັດ ຊີມັງລາວ ມະຫາຊົນ ປະຈຳປີ 2023

- **ມະຕິ** : ກອງປະຊຸມໄດ້ພິຈາລະນາ ແລະ ເຫັນດີດ້ວຍຄະແນນສຽງທັງໝົດຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມຄື :
  - ເຫັນດີຈຳນວນ 28,043,700 ສຽງ ເທົ່າກັບ 100 %
  - ບໍ່ເຫັນດີຈຳນວນ 0 ສຽງ ເທົ່າກັບ 0 %

- **ວາລະທີ 3** : ພິຈາລະນາ ແລະ ຮັບຮອງເອກະສານລາຍງານການເງິນ ຂອງບໍລິສັດ ຊີມັງລາວ ມະຫາຊົນ ປະຈຳປີ 2023.

- **ມະຕິ** : ກອງປະຊຸມໄດ້ພິຈາລະນາ ແລະເຫັນດີດ້ວຍຄະແນນສຽງທັງໝົດຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມຄື :
  - ເຫັນດີຈຳນວນ 28,043,700 ສຽງ ເທົ່າກັບ 100 %
  - ບໍ່ເຫັນດີຈຳນວນ 0 ສຽງ ເທົ່າກັບ 0 %

- **ວາລະທີ 4** : ພິຈາລະນາ ແລະ ຮັບຮອງ ສັນຍາວ່າດ້ວຍການຮັບເໝົາໂຄງການກໍ່ສ້າງ ເຂດຮີສອດສາກົນໝອງສີຟ້າດອງຈັນວັ້ງວຽງ (ສູນຝຶກອົບຮົມວັ້ງວຽງ ກະຊວງປ້ອງກັນປະເທດ)

- **ມະຕິ** : ກອງປະຊຸມໄດ້ພິຈາລະນາ ແລະເຫັນດີດ້ວຍຄະແນນສຽງທັງໝົດຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມຄື :
  - ເຫັນດີຈຳນວນ 28,043,700 ສຽງ ເທົ່າກັບ 100 %
  - ບໍ່ເຫັນດີຈຳນວນ 0 ສຽງ ເທົ່າກັບ 0 %

- **ວາລະທີ 5** : ພິຈາລະນາ ແລະ ຮັບຮອງ ສັນຍາວ່າດ້ວຍການຮັບເໝົາໂຄງການກໍ່ສ້າງເຂດສາທິດເສດຖະກິດ ອຸດສາຫະກຳ ການທ່ອງທ່ຽວ ແລະ ວັດທະນະທຳ ວັ້ງວຽງ

- **ມະຕິ** : ກອງປະຊຸມໄດ້ພິຈາລະນາ ແລະເຫັນດີດ້ວຍຄະແນນສຽງທັງໝົດຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມຄື :
  - ເຫັນດີຈຳນວນ 28,043,700 ສຽງ ເທົ່າກັບ 100 %
  - ບໍ່ເຫັນດີຈຳນວນ 0 ສຽງ ເທົ່າກັບ 0 %

- **ວາລະທີ 6** : ພິຈາລະນາ ແລະ ຮັບຮອງ ກິດລະບຽບຂອງກຸ່ມບໍລິສັດ ທ່ອງທ່ຽວ ວັດທະນະທຳ ລາວ ມະຫາຊົນ

- **ມະຕິ** : ກອງປະຊຸມໄດ້ພິຈາລະນາ ແລະເຫັນດີດ້ວຍຄະແນນສຽງທັງໝົດຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມຄື :
  - ເຫັນດີຈຳນວນ 28,043,700 ສຽງ ເທົ່າກັບ 100 %
  - ບໍ່ເຫັນດີຈຳນວນ 0 ສຽງ ເທົ່າກັບ 0 %

- **ວາລະທີ 7** : ພິຈາລະນາ ແລະ ຮັບຮອງ ການຂຶ້ນທະບຽນບັນດາບໍລິສັດລູກ

- **ມະຕິ** : ກອງປະຊຸມໄດ້ພິຈາລະນາ ແລະເຫັນດີດ້ວຍຄະແນນສຽງທັງໝົດຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມຄື :
  - ເຫັນດີຈຳນວນ 28,043,700 ສຽງ ເທົ່າກັບ 100 %
  - ບໍ່ເຫັນດີຈຳນວນ 0 ສຽງ ເທົ່າກັບ 0 %

- **ວາລະທີ 8** : ພິຈາລະນາ ແລະ ຮັບຮອງ ການຮ່ວມທຶນເຂົ້າສູນຜະລິດຮູບເງົາ-ໂທລະພາບລາວ

- **ມະຕິ** : ກອງປະຊຸມໄດ້ພິຈາລະນາ ແລະເຫັນດີດ້ວຍຄະແນນສຽງທັງໝົດຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມຄື :
  - ເຫັນດີຈຳນວນ 28,043,700 ສຽງ ເທົ່າກັບ 100 %
  - ບໍ່ເຫັນດີຈຳນວນ 0 ສຽງ ເທົ່າກັບ 0 %

- **ວາລະທີ 9** : ພິຈາລະນາ ແລະ ຮັບຮອງ ການປ່ຽນແປງຜູ້ບໍລິຫານຂັ້ນສູງຂອງບໍລິສັດ ຊິມັງ ລາວ ມະຫາຊົນ

- **ມະຕິ** : ກອງປະຊຸມໄດ້ພິຈາລະນາ ແລະເຫັນດີດ້ວຍຄະແນນສຽງທັງໝົດຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມຄື :
  - ເຫັນດີຈຳນວນ 28,043,700 ສຽງ ເທົ່າກັບ 100 %
  - ບໍ່ເຫັນດີຈຳນວນ 0 ສຽງ ເທົ່າກັບ 0 %

ດັ່ງນັ້ນ, ຈຶ່ງຮຽນມາຍັງທ່ານ ເພື່ອຊາບ ໃຊ້ຕາງລາຍງານ
ດ້ວຍຄວາມເຄົາລົບ ແລະນັບຖືເປັນຢ່າງສູງ,

ປະທານກອງປະຊຸມ

ເນ້ຍເຫຼ້ຍ